ຂ່າວ NEWS
ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ພະແນກຂໍ້ມູນຂ່າວສານ ແລະ ປະຊາສໍາພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

# ກອງປະຊຸມກວດກາຄວາມສອດຄ່ອງທາງດ້ານກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ)




ໃນລະຫວ່າງວັນທີ 14-16 ສິງຫາ 2023 ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງປະຊຸມ ກວດກາຄວາມສອດຄ່ອງທາງດ້ານກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ຂຶ້ນ ໂດຍການເປັນປະທານຂອງທ່ານ ນ ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ, ປະທານຮ່ວມໂດຍທ່ານ ກົງຈີ ຢ່າງຈື, ຮອງລັດຖະມົນຕີກະຊວງຍຸຕິທໍາ, ມີບັນດາທ່ານຄະນະກົມ ແລະ ຄະນະວິຊາການ ຈາກສະພາແຫ່ງຊາດ, ຫ້ອງວ່າການ ສນຍ, ກະຊວງການເງິນ ແລະ ຄະນະວິຊາການ ພາຍໃນ ທຫລ ເຂົ້າຮ່ວມ.

ຈຸດປະສົງຂອງການຈັດກອງປະຊຸມໃນຄັ້ງນີ້, ເພື່ອປຶກສາຫາລື ແລະ ປະກອບຄໍາຄິດເຫັນຕໍ່ຮ່າງກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ເຊິ່ງກົດໝາຍວ່າດ້ວຍລະບົບການຊໍາລະ ສະບັບ ເລກທີ 32/ສພຊ, ລົງວັນທີ 07 ພະຈິກ 2017 ໄດ້ນໍາໃຊ້ມາເປັນເວລາ 6 ປີແລ້ວ ເຫັນວ່າມີບາງດ້ານ ໃນການຈັດຕັ້ງປະຕິບັດຍັງບໍ່ທັນຄ່ອງຕົວ ແລະ ຍັງບໍ່ທັນແທດເໝາະກັບສະພາບການຂະຫຍາຍຕົວຂອງວຽກງານລະບົບຊໍາລະໃນປະຈຸບັນ ສະນັ້ນ, ເພື່ອເປັນບ່ອນອີງໃຫ້ການເຄື່ອນໄຫວ ແລະ ການຄຸ້ມຄອງລະບົບການຊໍາລະ ຂອງ ສປປ ລາວ ພ້ອມທັງສ້າງເງື່ອນໄຂອໍານວຍຄວາມສະດວກໃຫ້ແກ່ການເຕີບໃຫຍ່ຂະຫຍາຍຕົວດ້ານວຽກງານການຊໍາລະ ໃຫ້ໄດ້ທັງດ້ານປະລິມານ ແລະ ຄຸນນະພາບ, ເຮັດໃຫ້ການຄຸ້ມຄອງລະບົບການຊໍາລະເປັນລະບົບລວມສູນ ແລະ ໃຫ້ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ ສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

ກອງປະຊຸມກວດກາຄວາມສອດຄ່ອງທາງດ້ານກົດໝາຍວ່າດ້ວຍລະບົບການຊໍາລະ (ສະບັບປັບປຸງ) ດັ່ງກ່າວ, ແມ່ນດໍາເນີນໄປເປັນເວລາ 3 ວັນ ດ້ວຍບັນຍາກາດອົບອຸ່ນ ແລະ ມີຜົນສໍາເລັດໄດ້ຕາມຈຸດປະສົງລະດັບຄາດໝາຍທີ່ວາງໄວ້.

ຂ່າວ-ພາບ: ສົມພິດ ທໍາມະວົງ

*ຢູ່ເມືອງລາວໃຊ້ເງິນກີບລາວ*